ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ກົມໃຫຍ່ຕຳຫຼວດ

ກົມຕຳຫຼວດເສດຖະກິດ

ເລກທີ 301/302

ລົງວັນທີ 27/03/2020

# ແຈ້ງການ

ເຖິງ: ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ ພໍ່ແມ່ປະຊາຊົນ, ແມ່ຄ້າຊາວຂາຍ, ບັນດາຫົວໜ່ວຍທຸລະກິດ ຫຼື ບໍລິສັດ ຕ່າງໆ, ຢູ່ນະຄອນຫຼວງວຽງຈັນ ແລະ ໃນຂອບເຂດທົ່ວປະເທດ ເພື່ອຊາບ.

ເລື່ອງ: ສະພາບການຂາຍຫວຍເຖື່ອນ, ບໍລິການຕູ້ເກມ (SLOT MACHINE), ເກມອອນລາຍ ແລະ ທຸລະກິດຕ່າງໆທີ່ຜິດກົດໝາຍ.

– ອີງຕາມ ມາດຕາ 141 ການຫຼິ້ນການພະນັນທີ່ຕ້ອງຫ້າມ, ໝວດທີ 2 ຂອງປະມວນກົດໝາຍອາຍາ ທີ່ທ່ານປະທານປະເທດປະກາດໃຊ້ໃນວັນທີ 26 ມິຖຸນາ 2017.

– ຄຳສັ່ງແນະນຳ ຂອງທ່ານ ລັດຖະມົນຕີ ກະຊວງການເງິນ ກ່ຽວກັບບັນຫາຄຸ້ມຄອງກິດຈະການຫວຍ ສະບັບເລກທີ 1332/ກງ, ລົງວັນທີ 17/06/2009.

– ອີງຕາມ ແຈ້ງການຫ້ອງການກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກ່ຽວກັບຫ້າມບໍ່ໃຫ້ອອກໃບອະນຸຍາດ ສ້າງຕັ້ງສູນບໍລິການຕູ້ເກມໄຟຟ້າ (SLOT MACHINE) ໃນຂອບເຂດທົ່ວປະເທດ ສະບັບເລກທີ 157/ຫກ, ລົງວັນທີ 24 ເມສາ 2017.

– ອີງຕາມ ແຈ້ງການຂອງທ່ານ ລັດຖະມົນຕີ, ຫົວໜ້າຫ້ອງການສຳນັກງານນາຍົກລັດຖະມົນຕີ ວ່າດ້ວຍບັນຫາປະກົດການຫຍໍ້ທໍ້ໃນສັງຄົມ ຕິດພັນກັບການພະນັນ ສະບັບເລກທີ 1971/ຫສນຍ, ລົງວັນທີ 13/12/2017.

– ອີງຕາມ ຄຳເຫັນຊີ້ນຳຂອງທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ຕາມບົດລາຍງານສະບັບເລກທີ 454/503, ລົງວັນທີ 11/12/2019.

– ອີງຕາມ ແຈ້ງການຂອງທ່ານ ລັດຖະມົນຕີ, ຫົວໜ້າຫ້ອງການສຳນັກງານນາຍົກລັດຖະມົນຕີ ວ່າດ້ວຍສະພາບການຂາຍຫວຍເຖື່ອນ, ຕູ້ເກມ (SLOT MACHINE), ເກມອອນລາຍ ແລະ ທຸລະກິດຕ່າງໆ ທີ່ຜິດກົດໝາຍ ສະບັບເລກທີ 2253/ຫສນຍ, ລົງວັນທີ 25/12/2019.

– ອີງຕາມ ຄຳແນະນຳຂອງທ່ານຫົວໜ້າກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍການເພີ່ມທະວີ ແກ້ໄຂຕໍ່ສະພາບການຂາຍຫວຍເຖື່ອນ, ຕູ້ເກມ (SLOT MACHINE), ເກມອອນລາຍ ແລະ ທຸລະກິດຕ່າງໆ ທີ່ຜິດກົດໝາຍ ສະບັບເລກທີ 02/ຕຫຼ, ລົງວັນທີ 19/03/2020.

ກົມຕຳຫຼວດເສດຖະກິດ ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ຂໍຖືເປັນກຽດແຈ້ງທິດຊີ້ນຳຂອງຂັ້ນເທິງ ມາຍັງພະນັກງານລັດຖະກອນ, ທະຫານ, ຕຳຫຼວດ ພໍ່ແມ່ປະຊາຊົນ, ແມ່ຄ້າຊາວຂາຍ, ບັນດາຫົວໜ່ວຍທຸລະກິດ ຫຼື ບໍລິສັດ ຕ່າງໆ ທີ່ປະກອບອາຊີບບໍ່ໄດ້ຮັບອະນຸຍາດເຊັ່ນ: ການຂາຍຫວຍເຖື່ອນ, ການໃຫ້ບໍລິການຕູ້ເກມ (SLOT MACHINE), ເກມອອນລາຍ ແລະ ທຸລະກິດຕ່າງໆ ທີ່ຜິດກົດໝາຍ ແມ່ນໃຫ້ຢຸດເຊົາ, ຖ້າບໍ່ມີການຢຸດເຊົາ ແມ່ນຈະນຳໃຊ້ມາດຕະການດັ່ງລຸ່ມນີ້:

1. ມາດຕະການຕໍ່ຜູ້ທີ່ໃຫ້ການຂາຍຫວຍເຖື່ອນ, ການໃຫ້ບໍລິການຕູ້ເກມ (SLOT MACHINE), ເກມອອນລາຍ ແລະ ທຸລະກິດຕ່າງໆ ທີ່ຜິດກົດໝາຍ.

1.1. ໂດຍອີງໃສ່ ຄຳສັ່ງແນະນຳ ຂອງທ່ານລັດຖະມົນຕີ ກະຊວງການເງິນ ວ່າດ້ວຍການຄຸ້ມຄອງກິດຈະການຫວຍ ສະບັບເລກທີ 1332/ກງ, ລົງວັນທີ 17/06/2009 ແລະ ປະມວນກົດໝາຍອາຍາ ດັ່ງນີ້:

– **ກະທຳຜິດຄັ້ງທີ 01 :** ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ມີການເຄື່ອນໄຫວ ພິມ-ຈຳໜ່າຍຫວຍທີ່ບໍ່ໄດ້ຮັບອະນຸຍາດ ຕ້ອງເຊີນມາເຮັດບົດບັນທຶກສຶກສາອົບຮົມ ຕັກເຕືອນ ໃຫ້ຢຸດເຊົາ, ກໍລະນີພົບເຫັນເຄື່ອງມື ວັດຖຸອຸປະກອນທີ່ນຳໃຊ້ເຂົ້າໃນການກະທຳຜິດ ແມ່ນຢຶດໄວ້ເພື່ອເປັນຂອງກາງຄະດີ.

– **ກະທຳຜິດຄັ້ງທີ 02 :** ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຫາກຍັງສືບຕໍ່ເຄື່ອນໄຫວ ພິມ-ຈຳໜ່າຍຫວຍທີ່ບໍ່ໄດ້ຮັບອະນຸຍາດ ຕ້ອງເຊີນມາຕັກເຕືອນ ພ້ອມທັງປັບໃໝ 50% ຂອງມູນຄ່າພິມ- ຈຳໜ່າຍທີ່ກວດກາເຫັນ, ໃນກໍລະນີທີ່ໄດ້ຖືກປັບໃໝ 01 ຄັ້ງແລ້ວ ແຕ່ຍັງສືບຕໍ່ລະເມີດ ຈະຖືກປັບໃໝຄັ້ງທີ 02 ເທົ່າກັບ 100% ຂອງມູນຄ່າພິມຈຳໜ່າຍໃບຫວຍທີ່ກວດກາເຫັນ, ກໍລະນີພົບເຫັນເຄື່ອງມື ວັດຖຸອຸປະກອນທີ່ນຳໃຊ້ເຂົ້າໃນການກະທຳຜິດ ແມ່ນຢຶດໄວ້ເພື່ອເປັນຂອງກາງຄະດີ.

– **ກະທຳຜິດຄັ້ງທີ 03 :** ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫາກຍັງສືບຕໍ່ເຄື່ອນໄຫວກະທຳຜິດ ຕ້ອງຖືກດຳເນີນຄະດີຢ່າງເດັດຂາດ ຕາມມາດຕາ 141: ການຫຼິ້ນການພະນັນທີ່ຕ້ອງຫ້າມ ຂອງປະມວນກົດໝາຍອາຍາ ແຫ່ງ ສປປ ລາວ.

1.2. ມາດຕະການຕໍ່ຜູ້ກະທຳຜິດ ບໍລິການຕູ້ເກມ (SLOT MACHINE)ແລະ ເກມອອນລາຍ ທີ່ຜິດກົດໝາຍໂດຍອີງໃສ່ ແຈ້ງການຂອງຫ້ອງການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເລື່ອງການອະນຸມັດໃຫ້ລ້າງຕັ້ງຮູບບໍລິການຕູ້ເກມ (SLOT MACHINE) ສະບັບເລກທີ 157/ຫກ, ລົງວັນທີ 24/04/2017 ແລະ ມາດຕາ 141: ການຫຼິ້ນການພະນັນທີ່ຕ້ອງຫ້າມ ຂອງປະມວນກົດໝາຍອາຍາ ແຫ່ງ ສປປ ລາວ ດັ່ງນີ້:

– **ກະທຳຜິດຄັ້ງທີ 01 :** ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ມີການເຄື່ອນໄຫວ ບໍລິການຕູ້ເກມ (SLOT MACHINE) ແລະ ເກມອອນລາຍ ທີ່ບໍ່ໄດ້ຮັບອະນຸຍາດ ເຊີນມາເຮັດບົດບັນທຶກສຶກສາອົບຮົມ ຕັກເຕືອນ ໃຫ້ຢຸດເຊົາ, ກໍລະນີພົບເຫັນເຄື່ອງມື ວັດຖຸອຸປະກອນທີ່ນຳໃຊ້ເຂົ້າໃນການກະທຳຜິດ ແມ່ນຢຶດໄວ້ເພື່ອເປັນຂອງກາງຄະດີ.

– **ກະທຳຜິດຄັ້ງທີ 02:** ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຍັງສືບຕໍ່ກະທຳຜິດ ຕ້ອງເຊີນເຂົ້າມາສອບສວນເອົາຄຳໃຫ້ການສາລະພາບຄວາມຜິດ ຕໍ່ເຈົ້າໜ້າທີ່ຕຳຫຼວດ ພ້ອມທັງປັບໃໝເປັນເງິນ ຈຳນວນ 2.00.000 ກີບ ຫາ 5.000.000 ກີບ, ກໍລະນີພົບເຫັນເຄື່ອງມື ວັດຖຸອຸປະກອນທີ່ນຳໃຊ້ເຂົ້າໃນການກະທຳຜິດ ແມ່ນຢຶດໄວ້ເພື່ອເປັນຂອງກາງຄະດີ.

– **ກະທຳຜິດຄັ້ງທີ 03 :** ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຍັງສືບຕໍ່ກະທຳຜິດ ຕ້ອງຖືກນຳໃຊ້ມາດຕະການທາງດ້ານກົດໝາຍຢ່າງເດັດຂາດ (ກັກຕົວ) ຕາມມາດຕາ 141: ການຫຼິ້ນການພະນັນທີ່ຕ້ອງຫ້າມ ຂອງປະມວນກົດໝາຍອາຍາ ແຫ່ງ ສປປ ລາວ.

1.3. ມາດຕະການຕໍ່ຜູ້ກະທຳຜິດທີ່ເຄື່ອນໄຫວເຮັດທຸລະກິດຕ່າງໆ ທີ່ຜິດກົດໝາຍ ໂດຍອີງໃສ ແຈ້ງການຂອງທ່ານ ລັດຖະມົນຕີ ຫົວໜ້າຫ້ອງການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 2253/ຫລນຍ, ລົງວັນທີ 25/12/2019 ວ່າດ້ວຍການດຳເນີນ ທຸລະກິດຕ່າງໆ ທີ່ຜິດກົດໝາຍ ແລະ ປະຕິບັດຕາມມາດຕາການທີ່ກ່ຽວຂ້ອງໃນປະມວນກົດໝາຍອາຍາ ທີ່ທ່ານປະທານປະເທດປະກາດໃຊ້ໃນວັນທີ 26 ມິຖຸນາ 2017.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງ ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ ພໍ່ແມ່ປະຊາຊົນ, ແມ່ຄ້າຊາວຂາຍ ບັນດາຫົວໜ່ວຍທຸລະກິດ ຫຼື ບໍລິສັດ ຕ່າງໆ, ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າກົມຕຳຫຼວດເສດຖະກິດ**

ກົມໃຫຍ່ຕຳຫຼວດ
ກົມຕຳຫຼວດເສດຖະກິດ

**ພັອ ປອ ຄຳແຝງ ວັນດີໄຊ**
**Col. Dr. Khamfeng VANDIXAY**